pwc

**ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ**

**ເຖິງ: ຂາຮຸ້ນຂອງທະນາຄານ ທະນາຄານ ຮ່ວມພັດທະນາ**

**ຄວາມເຫັນ**

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນອີງຕາມຈຸດປະສົງພິເສດ (**"**ເອກະສານລາຍງານການເງິນ**"**) ຂອງ ທະນາຄານ ຮ່ວມພັດທະນາ (ທະນາຄານ) ສໍາລັບປີສິ້ນສຸດ ວັນທີ 31 ທັນວາ 2024 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

**ເອກະສານລາຍງານການເງິນທີ່ກວດສອບ**

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຜົນໄດ້ຮັບສັງລວມ ສໍາລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2024
- ໃບລາຍງານສ່ວນປ່ຽນແປງທຶນ ສໍາລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສໍາລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສໍາຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພວກເຮົາໄດ້ດໍາເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສໍາລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສໍາລັບການອອກຄວາມເຫັນຂອງພວກເຮົາ.

**ຄວາມເປັນອິດສະຫລະ**

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກໍານົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກໍານົດໂດຍຄະນະກໍາມະການຈັນຍາບັນ ນານາຊາດ ສໍາລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

pwc

**ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ບົດລາຍງານການເງິນ.**

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານທີ່ໄດ້ອະທິບາຍໄວ້ ໃນບົດຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງເອກະສານລາຍງານການເງິນອາດບໍ່ເໝາະສົມກັບວັດຖຸປະສົງອື່ນ.

ບົດລາຍງານຂອງພວກເຮົາມີໄວ້ສຳລັບທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ ບໍ່ຄວນແຈກຢາຍໃຫ້ບຸກຄົນອື່ນ ຫຼື ນຳໃຊ້ໂດຍບຸກຄົນອື່ນທີ່ບໍ່ແມ່ນທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນີ້.

**ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ**

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານໃນການດຳເນີນງານຢ່າງຕໍ່ເນື່ອງ ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ ຍົກເວັ້ນຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

**ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ**

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

*ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈຳກັດຜູ້ດຽວ. ຊັ້ນ 4 ອາຄານອາລີອັນສ໌, ອາຄານເລກທີ 33 ຖະໜົນລ້ານຊ້າງ ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: 856 21 222718/9. www.pwc.com/la*

pwc

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ. ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ. ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ. ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສວໍເຕີເຮົ້າສຄູບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍທ່ານ: ອະພິສິດ ທ່ຽງຕົງພົນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ. ສປປ ລາວ
ວັນທີ: 18 ກໍລະກົດ 2025

*ບໍລິສັດ ພຣາຍສວໍເຕີເຮົ້າສຄູບເປີສ (ລາວ) ຈຳກັດຜູ້ດຽວ. ຊັ້ນ 4 ອາຄານອາລີອັນສ໌, ອາຄານເລກທີ 33 ຖະໜົນລ້ານຊ້າງ ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: 856 21 222718/9. www.pwc.com/la*

ທະນາຄານ ຮ່ວມພັດທະນາ ຈຳກັດ

**ໃບລາຍງານຜົນໄດ້ຮັບສັງລວມ**
**ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024**

| | ບົດອະທິບາຍ | 2024<br>ກີບ | 2023<br>ກີບ |
|---|---|---|---|
| ລາຍຮັບດອກເບ້ຍ | 4 | 2,258,882,243,860 | 1,502,891,737,472 |
| ລາຍຈ່າຍດອກເບ້ຍ | 5 | (1,436,263,848,970) | (1,024,785,846,376) |
| **ລາຍຮັບສຸດທິຈາກດອກເບ້ຍ** | | **822,618,394,890** | **478,105,891,096** |
| ລາຍຮັບຈາກຄ່າທຳນຽມ ແລະ ບໍລິການ | 6 | 536,722,484,019 | 343,154,705,946 |
| ລາຍຈ່າຍຈາກຄ່າທຳນຽມ ແລະ ບໍລິການ | 6 | (126,085,555,181) | (67,755,220,241) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ບໍລິການ** | | **410,636,928,838** | **275,399,485,705** |
| ກຳໄລສຸດທິ ຈາກເງິນຕາຕ່າງປະເທດ | 7 | 279,351,819,752 | 200,856,857,250 |
| ສ່ວນແບ່ງ ກຳໄລຂອງບໍລິສັດຮ່ວມທຶນ | 14 | 1,506,824,285 | 459,912,559 |
| ລາຍຮັບອື່ນໆຈາກການດຳເນີນງານ | 8 | 104,413,520,130 | 28,726,598,453 |
| **ລາຍຮັບຈາກການດຳເນີນງານ** | | **1,618,527,487,895** | **983,548,745,063** |
| ຄ່າໃຊ້ຈ່າຍການສູນເສຍຈາກສິນເຊື່ອ | 15 | 167,891,529,903 | (79,912,790,418) |
| **ລາຍຮັບສຸດທິຈາກການດຳເນີນງານ** | | **1,786,419,017,798** | **903,635,954,645** |
| ລາຍຈ່າຍບຸກຄະລາກອນ | 9 | (205,810,920,900) | (148,936,609,736) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (51,213,897,832) | (38,974,810,764) |
| ລາຍຈ່າຍອື່ນໆໃນການດຳເນີນງານ | 10 | (246,141,386,831) | (144,323,704,477) |
| **ລວມລາຍຈ່າຍໃນການດຳເນີນງານ** | | **(503,166,205,563)** | **(332,235,124,977)** |
| **ກຳໄລກ່ອນອາກອນ** | | **1,283,252,812,235** | **571,400,829,668** |
| ລາຍຈ່າຍອາກອນກຳໄລ | 23 | (205,915,432,708) | (75,581,962,928) |
| **ກຳໄລສຳລັບປີ** | | **1,077,337,379,527** | **495,818,866,740** |
| ຜົນໄດ້ຮັບ(ຈ່າຍ) ສັງລວມອື່ນໆ ສຳລັບປີ ຫຼັງອາກອນ | | | |
| **ລາຍໄດ້ລວມອື່ນໆ:** | | | |
| | | - | - |
| **ລວມຜົນໄດ້ຮັບ(ຈ່າຍ) ສັງລວມອື່ນໆສຳລັບປີ** | | **1,077,337,379,527** | **495,818,866,740** |

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ອະນຸມັດໂດຍ:

ທ່ານ ສາຄອນ ຍໍພັນໄຊ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 18 ກໍລະກົດ 2025

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 49

## ໃບລາຍງານຖານະການເງິນ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

| | ບົດອະທິບາຍ | 2024<br>ກີບ | 2023<br>ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດໃນຄັງ | 11 | 2,476,960,951,761 | 1,707,663,966,883 |
| ລາຍການລະຫວ່າງທະນາຄານ ແລະ ຕະຫຼາດເງິນຕາ | 12 | 5,856,970,791,731 | 4,548,557,288,137 |
| ການລົງທຶນທາງການເງິນ | 13 | 1,206,279,721,259 | 735,658,197,980 |
| ການລົງທຶນໃນບໍລິສັດຮ່ວມທຶນ | 14 | 4,932,911,894 | 2,426,087,609 |
| ເງິນກູ້ ແລະ ດອກເບ້ຍຄ້າງຈ່າຍສຸດທິ | 15 | 20,833,837,410,484 | 16,578,760,638,776 |
| ຊັບສິນບັດຄົງທີ່ ແລະ ອຸປະກອນ | 16 | 183,623,582,983 | 133,021,031,123 |
| ສິດໃນການນຳໃຊ້ຊັບສິນ | 17 | 20,568,776,615 | 16,074,516,091 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 18 | 177,439,684,047 | 128,330,587,334 |
| ອາກອນຊັບສິນເຍື່ອນຊຳລະ | 23.3 | 47,632,097,234 | 73,686,061,690 |
| ຊັບສິນອື່ນໆ | 19 | 2,408,878,675,704 | 1,773,137,442,501 |
| **ລວມຊັບສິນ** | | **33,217,124,603,712** | **25,697,315,818,124** |

**ທະນາຄານ ຮ່ວມພັດທະນາ ຈຳກັດ**

**ໃບລາຍງານຖານະການເງິນ**
**ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024**

| | ບົດອະທິບາຍ | 2024<br>ກີບ | 2023<br>ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນ** | | | |
| ເງິນຝາກຈາກລູກຄ້າ | 20 | 28,337,270,169,815 | 22,418,180,668,168 |
| ລາຍການລະຫວ່າງທະນາຄານ ແລະ ຕະຫຼາດເງິນຕາ | 21 | 1,623,080,247,270 | 727,719,512,017 |
| ເງິນກູ້ຢືມ | 22 | 1,070,968,344,964 | 1,350,427,742,581 |
| ໜີ້ສິນອື່ນໆ | | 433,514,992,056 | 234,163,022,115 |
| **ລວມໜີ້ສິນ** | | **31,464,833,754,105** | **24,730,490,944,881** |
| **ສ່ວນຂອງເຈົ້າຂອງ** | | | |
| ທຶນຈົດທະບຽນ | 24 | 674,666,100,000 | 474,666,100,000 |
| ກຳໄລສະສົມ | | | |
| ຈັດສັນແລ້ວ | | | |
| ຄັງສະສົມຕາມລະບຽບການ | 25 | 73,940,550,898 | 47,225,488,635 |
| ຄັງສຳຮອງທົ່ວໄປ | 25 | 95,094,307,105 | 68,379,244,842 |
| ກຳໄລ/(ຂາດທຶນ) ທີ່ບໍ່ເກີດຂຶ້ນຈິງຈາກ ການຕີມູນຄ່າຄືນຂອງຄຳ | 13 | (10,994,711,473) | - |
| ສ່ວນຕ່າງຈາກການຕີມູນຄ່າຊັບສິນ | | 23,671,958,000 | 23,671,958,000 |
| ຍັງບໍ່ໄດ້ຈັດສັນ | | 895,912,645,077 | 352,882,081,766 |
| **ລວມທຶນ** | | **1,752,290,849,607** | **966,824,873,243** |
| **ລວມໜີ້ສິນ ແລະ ທຶນ** | | **33,217,124,603,712** | **25,697,315,818,124** |

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ອະນຸມັດໂດຍ:

ທ່ານ ສາຄອນ ຍໍພັນໄຊ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 18 ກໍລະກົດ 2025

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 49

ທະນາຄານ ຮ່ວມພັດທະນາ ຈຳກັດ

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
**ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024**

| | ບົດອະທິບາຍ | ທຶນຈົດທະບຽນ ກີບ | ສ່ວນຕ່າງຈາກການຕີມູນຄ່າຊັບສິນ ກີບ | ກຳໄລ/(ຂາດທຶນ) ທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າຄຳຂອງ ກີບ | ຄັງສະສົມຕາມລະບຽບການ ກີບ | ຄັງສຳຮອງທົ່ວໄປ ກີບ | ກຳໄລສະສົມ ກີບ | ລວມ ກີບ |
|---|---|---|---|---|---|---|---|---|
| **ຍອດເຫລືອໃນວັນທີ 1 ມັງກອນ 2023** | | **444,666,100,000** | **23,671,958,000** | **-** | **31,030,555,697** | **19,794,446,027** | **148,572,007,922** | **667,735,067,646** |
| ການອອກຫຸ້ນທຶນຮຸ້ນ | 24 | 30,000,000,000 | - | - | - | - | - | **30,000,000,000** |
| ກຳໄລສຸດທິພາຍໃນປີ | | - | - | - | - | - | 495,818,866,740 | **495,818,866,740** |
| ແບ່ງເຂົ້າຄັງສະສົມຕາມລະບຽບການ | 25 | - | - | - | 16,194,932,938 | - | (16,194,932,938) | **-** |
| ແບ່ງເຂົ້າຄັງສຳຮອງທົ່ວໄປພາຍໃນປີ | 25 | - | - | - | - | 16,194,932,938 | (16,194,932,938) | **-** |
| ຄັງສຳຮອງສຳລັບການປັບໄໝອາກອນ | 25 | - | - | - | - | 32,389,865,877 | - | **32,389,865,877** |
| ເງິນປັນຜົນ | 26 | - | - | - | - | - | (259,118,927,020) | **(259,118,927,020)** |
| **ຍອດເຫຼືອໃນວັນທີ 31 ທັນວາ 2023** | | **474,666,100,000** | **23,671,958,000** | **-** | **47,225,488,635** | **68,379,244,842** | **352,882,081,766** | **966,824,873,243** |
| | | | | | | | | |
| **ຍອດເຫລືອໃນວັນທີ 1 ມັງກອນ 2024** | | **474,666,100,000** | **23,671,958,000** | **-** | **47,225,488,635** | **68,379,244,842** | **352,882,081,766** | **966,824,873,243** |
| ການອອກຫຸ້ນທຶນຮຸ້ນ | 24 | 200,000,000,000 | - | - | - | - | - | **200,000,000,000** |
| ກຳໄລສຸດທິພາຍໃນປີ | | - | - | - | - | - | 1,077,337,379,527 | **1,077,337,379,527** |
| ແບ່ງເຂົ້າຄັງສະສົມຕາມລະບຽບການ | 25 | - | - | - | 26,715,062,263 | - | (26,715,062,263) | **-** |
| ແບ່ງເຂົ້າຄັງສຳຮອງທົ່ວໄປພາຍໃນປີ | 25 | - | - | - | - | 26,715,062,263 | (26,715,062,263) | **-** |
| ກຳໄລ/(ຂາດທຶນ) ທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າຄືນຂອງຄຳ | 13 | - | - | (10,994,711,473) | - | - | - | **(10,994,711,473)** |
| ເງິນປັນຜົນ | 26 | - | - | - | - | - | (480,876,691,690) | **(480,876,691,690)** |
| **ຍອດເຫຼືອໃນວັນທີ 31 ທັນວາ 2024** | | **674,666,100,000** | **23,671,958,000** | **(10,994,711,473)** | **73,940,550,898** | **95,094,307,105** | **895,912,645,077** | **1,752,290,849,607** |

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ອະນຸມັດໂດຍ:

ທ່ານ ສີທອນ ບຸນພັນໄຊ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 18 ກໍລະກົດ 2025

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 49

**ໃບລາຍງານກະແສເງິນສົດ**
**ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024**

| | ບົດອະທິບາຍ | 2024<br>ກີບ | 2023<br>ກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລ/(ຂາດທຶນ) ສຸດທິກ່ອນຫັກອາກອນ** | | **1,283,252,812,235** | **571,400,829,668** |
| ດັດແກ້ສຳລັບ: | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 16,17 | 51,213,897,832 | 38,974,810,764 |
| ກຳໄລຈາກການຮ່ວມທຶນ | 14 | (1,506,824,285) | (459,912,559) |
| ຂາດທຶນຈາກການສະສາງ/ຂາຍຊັບສົມບັດຄົງທີ່ | | 7,799,416,893 | 429,614,932 |
| ຄ່າໃຊ້ຈ່າຍການສູນເສຍຈາກສິນເຊື່ອ | 15 | (167,891,529,903) | 79,912,790,418 |
| ລາຍຮັບດອກເບ້ຍ | | (2,312,092,333,857) | (1,493,438,032,829) |
| ລາຍຈ່າຍດອກເບ້ຍ | | 1,436,263,848,970 | 1,106,995,555,414 |
| **ກະແສເງິນສົດຈາກກຳໄລໃນການດຳເນີນງານກ່ອນການ ປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **297,039,287,885** | **303,815,655,808** |
| **ເພີ່ມຂຶ້ນ/(ຫຼຸດລົງ)ໃນຊັບສິນດຳເນີນງານ** | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | (255,663,014,139) | (864,767,294,860) |
| ເງິນກູ້ຢືມໃຫ້ລູກຄ້າ | | (3,729,913,481,063) | (4,892,210,969,643) |
| ຊັບສິນອື່ນໆ | | (635,741,233,202) | (1,030,720,251,874) |
| ເພີ່ມຂຶ້ນ/(ຫຼຸດລົງ)ໃນໜີ້ສິນດຳເນີນງານ | | | |
| ເງິນຝາກ | | 5,838,640,507,893 | 7,278,871,753,320 |
| ລາຍການລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 821,207,388,010 | 57,570,131,632 |
| ໜີ້ສິນອື່ນໆ | | 45,107,940,993 | 77,338,084,934 |
| **ກະແສເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ** | | **2,380,677,396,377** | **929,897,109,317** |
| ຈ່າຍດອກເບ້ຍ | | (1,268,620,325,590) | (459,322,769,078) |
| ຮັບດອກເບ້ຍ | | 1,901,610,483,118 | 1,663,441,838,611 |
| ຈ່າຍອາກອນກຳໄລ | | (79,364,937,665) | (76,965,587,808) |
| **ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການດຳເນີນງານ** | | **2,934,302,616,240** | **2,057,050,591,042** |
| **ກິດຈະກຳການລົງທຶນ** | | | |
| ລາຍຈ່າຍຊື້ຊັບສົມບັດຄົງທີ່ ແລະ ອຸປະກອນ | 16 | (96,317,196,917) | (49,637,210,900) |
| ຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 18 | (58,227,505,005) | (28,649,775,312) |
| ຊື້ສິດໃນການນຳໃຊ້ຊັບສິນ | 17 | (3,014,692,709) | (5,918,439,395) |
| ຈ່າຍເງິນໃນການລົງທຶນໃນຫຼັກຊັບທາງການເງິນ | | (235,612,634,755) | (173,661,886,619) |
| ຈ່າຍເງິນໃນການລົງທຶນໃນຫຼັກຊັບທາງການເງິນ-ຄຳ | 13 | (192,793,510,000) | - |
| ຈ່າຍເງິນໃນການລົງທຶນວິສາຫະກິດຮ່ວມທຶນ | 14 | (1,000,000,000) | - |
| **ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການລົງທຶນ** | | **(586,965,539,386)** | **(257,867,312,226)** |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

| | ບົດອະທິບາຍ | 2024<br>ກີບ | 2023<br>ກີບ |
|---|---|---|---|
| **ກິດຈະກຳຈັດຫາເງິນ** | | | |
| ຈ່າຍເງິນປັນຜົນ | 26 | (232,789,022,521) | (203,207,034,318) |
| ຈ່າຍເງິນກູ້ຢືມທະນາຄານກາງ | | (435,155,000,000) | (41,738,964,146) |
| ຮັບເງິນຈາກເງິນກູ້ຢືມທະນາຄານກາງ | | 142,654,420,000 | - |
| ຮັບເງິນຈາກການອອກຮຸ້ນສາມັນ | 24 | - | - |
| **ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະກຳຈັດຫາເງິນ** | | **(525,289,602,521)** | **(244,945,998,464)** |
| **ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **1,822,047,474,333** | **1,554,237,280,352** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | 4,926,937,017,468 | 3,372,699,737,116 |
| **ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໃນປີ** | 27 | **6,748,984,491,801** | **4,926,937,017,468** |
| **ກິດຈະກຳການລົງທຶນທີ່ບໍ່ແມ່ນເງິນສົດ** | | | |
| ການຈ່າຍເງິນປັນຜົນໂດຍຫັກລົບກັບໜີ້ຄ້າງຮັບຈາກຜູ້ຖືຮຸ້ນ ແລະ ອາກອນລາຍໄດ້ຈາກເງິນປັນຜົນ | | 248,087,669,169 | 55,911,892,702 |
| ໜີ້ຕ້ອງຈ່າຍສຳລັບສິດໃນການນຳໃຊ້ຊັບສິນ | | 5,659,829,191 | 4,227,577,291 |

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ອະນຸມັດໂດຍ:

ທ່ານ ສົມຄອນ ຍໍພັນໄຊ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 18 ກໍລະກົດ 2025